Lao Disabled Women's Development Centre

## ຫັດຖະກຳແລະວັດທະນາທຳການທ່ອງທ່ຽວ:ການທັດສະນະສຶກສາສຳລັບນັກຮຽນ

ສູນພັດທະນາແມ່ຍິງພິການຂອງພວກເຮົາເປັນສະຖານທີ່ໜຶ່ງທີ່ໜ້າສົນໃຈເໝາະໃນການເຂົ້າຢ້ຽມຢາມ ເຊິ່ງຕັ້ງໃນນະຄອນຫລວງວຽງຈັນ. ຢູ່ໃນສ່ວນມີເດີນຫຍ້ານັ່ງຫລິ້ນທີ່ສ່ວຍງາມ ສູນຂອງພວກເຮົາຕັ້ງຢູ່ຖະໜົນທ່າເດື່ອ, ເມືອງຫາດຊາຍຟອງ ໃກ້ກັບຂົວມິດຕະພາບລາວ - ໄທ. ແມ່ຍິງພິການສ່ວນຫລາຍທີ່ເຂົ້າຝຶກອົບຮົມແມ່ນມາຈາກແຂວງຕ່າງໆໃນຂອບເຂດທົ່ວປະເທດລາວ ທີ່ພັກອາໃສ່ ແລະ ສຶກສາຮ່ຳຮຽນຢູ່ສະຖານທີ່ນີ້ ເພື່ອຝຶກອົບຮົມວິຊາຊີບ ແລະ ເພີ້ມທັກສະ, ສ້າງຄວາມເຂັ້ມແຂງເຮັດໃຫ້ການດຳລົງຊີວິດຂອງເຂົາເຈົ້າຢ່າງເປັນເອກະລາດ ນັກຮຽນທີເຂົ້າຝຶກອົບຮົມສ່ວນຫລາຍເປັນແມ່ຍິງພິການ ການເຮັດວຽກຂອງພວກເຮົາແມ່ນບໍ່ຫວັງຜົນກຳໄລ່ ທ່ານຈະໄດ້ມ່ວນຊື່ນໃນການຫລິ້ນເກມການທັດສະນະສຶກສາຂອງພວກທ່ານແມ່ນສຳຄັນຫລາຍທີ່ຈະຊ່ວຍສ້າງຄວາມເຂັ້ມແຂງໃນການບໍລິຫານ ແລະ ຈະສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫລືອແມ່ຍິງພິການໃນລາວອີກໃນອະນາຄົດ.

### ໂຄງການທັດສະນະສຶກສາຂອງນັກຮຽນ (2-2,5 ຊົ່ວໂມງ)

ເລີ້ມຕົ້ນຄຳແນະນຳ ດ້ວຍການກ່າວຕອນຮັບທີມງານການຢ້ຽມຢາມຂອງພວກທ່ານ ນຳທ່ຽວດ້ວຍການອະທິບາຍ ພາລະໜ້າທີ ແລະ ຊົມການເຮັດກິດຈະກຳ ແລະ ການມີສ່ວນຮ່ວມຂອງສູນ ໃນແຕ່ລະປີ ຈະມີນັກຮຽນໃນຂອບເຂດທົ່ວປະເທດເຂົ້າມາດຳລົງຊີວິດ ແລະ ຍົກລະດັບຄວາມສາມາດໃນສູນແຫ່ງນີ້ ແລະ ພວກທ່ານຈະໄດ້ເຫັນວ່າການດຳລົງຊີວິດ ແລະ ການຮຽນຮູ້ຂອງຄົນພິການເປັນແນວໃດ ເມື່ອທ່ານເຂົາມາເຖິງສູນທ່ານຈະເຫັນໄດ້ວ່າ ສູນແຫ່ງນີ້ສ້າງລາຍຮັບດ້ວຍຕົນເອງ ແລະ ຄູສອນທີມີຄວາມຊຳນານ. ມ່ວນຊື່ນກັບງານສາທິດທີ່ສະແດງໃຫ້ເຫັນເຖິງສິ່ງທ້າທ່າຍຕໍ່ຄົນຄົນພິການ ແລະ ຮຽນຮູ້ການເຮັດຜະລິດຕະພັນທີ່ມາຈາກເຈ້ຍ.

| | |
|---|---|
| ຮູບແບບ: | ການນຳທ່ຽວ (30 ນາທີ). |
| | ເກມ (30 ນາທີ) |
| | ເຮັດຫັດຖະກຳ (30 ນາທີ) |
| | ອາຫານສວຍ (1 ຊົ່ວໂມງ) |
| ລາຄາ: | 30,000ກີບ, ຕໍ່ຄົນດີທີ່ສຸດຫ້ອງໜຶ່ງຈະມີນັກຮຽນ 30 ຄົນ. |
| ຜູ້ນຳທ່ຽວ: | ກຸ່ມໜຶ່ງມີ 2ຄົນຕໍ່ນັກຮຽນ 30ຄົນ. |
| | ອຸປະກອນຫັດຖະກຳ,ນັກຮຽນເອົາກັບບ້ານສິ່ງທີເຂົາເຮັດ,ນ້ຳດື່ມແລະອາຫານສວຍ. |

### ຄວາມຮູ້ກ່ຽວກັບ ສູນພັດທະນາແມ່ຍິງພິການ. (1:30 ຊົ່ວໂມງ)

ສູນພັດທະນາແມ່ຍິງພິການໄດ້ສ້າງຕັ້ງຂື້ນໃນປີ 2002. ເຊິງເປັນອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ່ ບໍລິຫານງານໂດຍແມ່ຍິງພິການ, ສຳລັບຄົນພິການ ແລະ ຄອບຄົວຂອງຄົນພິການໃນລາວ ສູນແຫ່ງນີ້ເຊື່ອວ່າຄົນພິການມີຄວາມສາມາດທີ່ບໍ່ຄືກັນ ເພາະ ມີຄວາມແຕກຕ່າງທາງດ້ານຮ່າງກາຍ ພາລະກິດຂອງສູນແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງສາມາດດຳເນີນງານດ້ວຍຕົນເອງ ໂດຍການຕອບສະໜອງໃຫ້ພວກເຂົາເຈົ້າໄດ້ເຂົ້າເຖິງການສຶກສາ ແລະ ການຈ້າງງານ ໃນອານາຄົດ.

Enabling the Disabled

ນັບແຕ່ປີ 2002, ເປັນຕົ້ນມາ ສູນພັດທະນາແມ່ຍິງພິການໄດ້ຕອບສະໜອງການຝຶກອົບຮົມໃຫ້ແກ່ແມ່ຍິງພິການຫລາຍກວ່າ 400 ຄົນທີ່ມາຈາກຂອບເຂດທົ່ວປະເທດ. ການຝຶກອົບຮົມໃນສູນມີ ຕັດຫຍິບ, ຕຳຫູກ, ຫັດຖະກຳ, ຄອມພິວເຕີ, ການໃຫ້ຄວາມຮູ້ດ້ານສຸຂະພາບ, ການຮຽນຮູ້ວິທີການເຮັດທຸລະກິດຂະໜາດດ້ວຍຕົນເອງ, ໜ່ວຍງານພັດທະນາສັງຄົມ, ພາສາອັງກິດ ແລະ ພາສາລາວ. ສິ່ງເຫລົ່ານີ້ແມ່ນການຝຶກອົບຮົມໄລຍະເວລາ 9 ເດືອນ ແລະ ໄລຍະສັ້ນທີ່ມີຄວາມແຕກຕ່າງກັນທີ່ ສພຍລ ໃນນະຄອນຫລວງຈັນ ສປປລາວ. ໃນທຸກປີ ສາມາດຮັບນັກຮຽນເຂົ້າຝຶກອົບຮົມ 30 ຄົນ ແລະ ທຸກຄົນແມ່ນພັກອາໃສ່ຢູ່ສະຖານທີ່ດັ່ງກ່າວດ້ວຍ.

## ສະມຸດບັນທຶກ

ການບັນທຶກ, ກະລຸນາຕິດດ້ວຍທາງໂທລະສັບ ຫຼື ທາງອີເມວ ພວກເຮົາເປີດແຕ່ ວັນຈັນ ຫາ ວັນ ສຸກ ເລີ້ມເວລາ 9:00 ເຖິງ 4:30 ໂມງ ແລະ ໃນວັນພັກທາງການຈະມີພະນັກງານປະຈຳຢູ່

(+856-21) 812282 820489/

020 5565 5353.

ອີເມວ : info@laodisabledwomen.com

## ສະຖານທີ່ຕັ້ງ

ຫ້ອງການພວກເຮົາຕັ້ງຢູ່ໃກ້ຂົວມິດຕະພາບລາວ - ໄທ ຖະໜົນທ່າເດືອ ທາງໄປວັດຊຽງຄວນ. ຫ່າງຈາກວຽງຈັນ ປະມານ 20 ກິໂລເມັດ, ໃຊ້ເວລາໃນການເດີນປະມານ 30 ນາທີ.